Fact Sheet - Lao

# ການເຮັດໝັນຊາຍ

Vasectomy

## ການເຮັດໝັນຊາຍແມ່ນຫຍັງ?

ການເຮັດໝັນຊາຍແມ່ນການຜ່າຕັດທີ່ຜູ້ຊາຍເຮັດ ເພື່ອວ່າເຂົາເຈົ້າຈະບໍ່ສາມາດເຮັດໃຫ້ແມ່ຍິງຕັ້ງທ້ອງໄດ້. ອັນນີ້ແມ່ນການຄຸມກຳເນີດແບບຖາວອນ.

## ການເຮັດໝັນຊາຍເຮັດວຽກແບບໃດ?

ມັນປ້ອງກັນບໍ່ໃຫ້ເຊື້ອສະເປີມເດີນທາງອອກຈາກລູກອັນທະ (ໄຂ່ຫຳ) ແລະເຂົ້າໄປໃນນ້ຳເຊື້ອ. ຖ້າວ່າບໍ່ມີເຊື້ອສະເປີມໃນນ້ຳເຊື້ອ, ແມ່ຍິງກໍບໍ່ສາມາດຕັ້ງທ້ອງໄດ້. ມັນຈະບໍ່ປ່ຽນແປງຄວາມສາມາດໃນການມີຄວາມສຸກທາງເພດຫຼືຫຼັ່ງນ້ຳເຊື້ອ.

## ມັນເຮັດວຽກໄດ້ດີປານໃດ?

ການເຮັດໝັນຊາຍເຮັດວຽກໄດ້ດີຫຼາຍ. ມັນເປັນຜົນໄດ້ເກີນ 99%.

## ຈະເກີດຫຍັງຂຶ້ນເມື່ອທ່ານເຮັດໝັນຊາຍ?

ການເຮັດໝັນຊາຍແມ່ນການຜ່າຕັດແບບ
ທຳມະດາ ທີ່ໃຊ້ເວລາປະມານ 20-40 ນາທີ.
ປົກກະຕິຈະເຮັດໂດຍການກິດປະສາດ ຫຼືໃສ່ຢາມືນ, ແຕ່ວ່າບາງທີກໍໃຊ້ວິທີວາງຢາສະຫຼົບ. ທ່ານໝໍຈະຜ່າເປີດດ້ານໜ້າຂອງໄຂ່ຫຳຂອງຜູ້ຊາຍ, ຕັດແລະປິດທາງປາຍຂອງທໍ່ທີ່ເກັບເຊື້ອສະເປີມ. ການຜ່າເປີດໄຂ່ຫຳຈະຖືກປິດໂດຍການຫຍິບແລະກິດປາຍໜັງໃຫ້ເຂົ້າກັນ.
ຫຼັງຈາກຜ່າຕັດແລ້ວ, ຜູ້ຊາຍອາດຈະຖືກຂໍໃຫ້ຖ້າຢູ່ທີ່ສູນເປັນເວລາຮອດສອງຊົ່ວໂມງ. ຢາແກ້ປວດແລະການໃສ່ສິ້ງຊັ້ນໃນຮັດໄວ້ອາດຊ່ວຍບັນເທົາການເຈັບລົງໄດ້.

## ຫຼັງຈາກເຮັດໝັນ

ຜູ້ຊາຍຄວນພັກຜ່ອນສອງສາມມື້ແລະຫຼີກເວັ້ນການອອກແຮງທາງຮ່າງກາຍແບບໜັກເປັນເວລາໜຶ່ງອາທິດ.
ທ່ານໝໍຈະບອກລາວວ່າຍາມໃດຈຶ່ງສາມາດອາບນ້ຳຝັກບົ່ວຫຼືອາບນ້ຳໄດ້, ຍາມໃດຈຶ່ງເອົາຜ້າພັນແຜອອກໄດ້, ແລະຍາມໃດຈຶ່ງຈະຮ່ວມເພດໄດ້ຄືນ.

## ຕອນໃດມັນຈຶ່ງຈະເປັນຜົນ?

ຜູ້ຊາຍອາດຈະມີເຊື້ອສະເປີມຢູ່ລະຍະໜຶ່ງຫຼັງຈາກຜ່າຕັດ. ອາດຈະຕ້ອງຫຼັ່ງນ້ຳເຊື້ອເຖິງ 20 ຄັ້ງກ່ອນຈະປາສະຈາກຕົວເຊື້ອ. ລາວຕ້ອງເອົາຕົວຢ່າງນ້ຳເຊື້ອຂອງລາວໄປໃຫ້ຫ້ອງທົດລອງກວດເບິ່ງສອງເດືອນຫຼັງຈາກຜ່າຕັດ. ລາວອາດຕ້ອງໃຊ້ວິທີການຄຸມກຳເນີດແບບອື່ນ, ເຊັ່ນໃຊ້ຖົງອະນາໄມ, ຈົນກວ່າຜົນການກວດຈະສະແດງໃຫ້ເຫັນວ່ານ້ຳເຊື້ອຂອງລາວບໍ່ມີຕົວເຊື້ອສະເປີມແລ້ວ.

## ມີຜົນຂ້າງຄຽງຫຍັງບໍ?

ອາດມີການເຈັບແດ່ເລັກນ້ອຍ, ມີການໃຄ່ແລະມີຮອຍຊ້ຳຢູ່ສອງສາມມື້ຫຼັງຈາກຜ່າຕັດ. ຜົນຂ້າງຄຽງທີ່ຮ້າຍແຮງນັ້ນເກີດຂຶ້ນຍາກ.

## ຈະເກີດຫຍັງຂຶ້ນຖ້າມັນບໍ່ເຮັດວຽກ?

ປະມານໜຶ່ງໃນການເຮັດໝັນ 500 -1,000 ຄັ້ງຈະລົ້ມເຫຼວແລະຜູ້ຊາຍອາດຈະຍັງຈະເລີນພັນຢູ່ຫຼືເກີດເປັນຈະເລີນພັນຄືນມາໄດ້ອີກ. ຕາມທຳມະດາ ແລ້ວ ເລື້ອງນີ້ຈະຮູ້ໄດ້ຈາກຜົນການກວດສາມເດືອນຫຼັງການຜ່າຕັດ, ແຕ່ມັນອາດເກີດຂຶ້ນຍາມໃດກໍໄດ້.

## ການເຮັດໝັນຊາຍສາມາດປີ້ນຄືນໄດ້ບໍ?

ບາງເທື່ອການເຮັດໝັນຊາຍກໍສາມາດປີ້ນຄືນໄດ້ແຕ່ວ່າເຖິງວ່າການຜ່າຕັດເຮັດໄດ້ຜົນ, ກໍບໍ່ມີການຮັບປະກັນວ່າຜູ້ຊາຍຄົນນັ້ນຈະສາມາດເປັນພໍ່ຂອງເດັກໄດ້ອີກ. ຖ້າຜູ້ຊາຍຄິດວ່າມີເປີເຊັນວ່າຕົນເອງອາດຈະຢາກເປັນພໍ່ໃນອະນາຄົດ ລາວບໍ່ຄວນເຮັດໝັນຊາຍ.

## ທ່ານຈະໄປເຮັດໝັນຊາຍໄດ້ຢູ່ໃສ?

ທ່ານໝໍທ້ອງຖິ່ນຫຼືຄລີນິກວາງແຜນຄອບຄົວສາມາດສົ່ງທ່ານໄປເຮັດໝັນຊາຍໄດ້. ຜູ້ຊາຍບໍ່ຈຳເປັນຕ້ອງຂໍອະນຸຍາດຈາກຄູ່ຄອງກ່ອນເຮັດໝັນຊາຍ.

### ຖ້າຕ້ອງການຂໍ້ມູນເພີ່ມເຕີມ

- *ໃຫ້ຕິດຕໍ່ສາຍສົນທະນາຂອງພະແນກວາງແຜນຄອບຄົວແຫ່ງລັດ NSW ທີ່ເລກໂທ 1300 658 886 ຫຼືເຂົ້າໄປເບິ່ງ www.fpnsw.org.au/talkline*
- *NRS (ສຳລັບຄົນພິການຫູ) 133 677*
- *ຫຼືໄປທີ່ຄລີນິກວາງແຜນຄອບຄົວໃກ້ບ້ານທ່ານ*



ພະແນກວາງແຜນຄອບຄົວ ຣັດ NSW ແມ່ນອົງການທີ່ບໍ່ຫວັງຜົນກຳໄລ ໄດ້ຮັບການອຸປະຖຳໂດຍກະຊວງສາທາຣະນະສຸກ ຣັດ NSW.

ຂໍ້ມູນຢູ່ໃນເຈັ້ຍຂໍ້ມູນນີ້ແມ່ນສະໜອງເພື່ອຈຸດປະສົງດ້ານການສຶກສາເທົ່ານັ້ນ. FNPNSW ໄດ້ພະຍາຍາມສຸດຄວາມສາມາດເພື່ອຮັບປະກັນວ່າຂໍ້ມູນນີ້ຖືກຕ້ອງແລະທັນກັບເຫດການ ໃນເວລາພິມ. ທ່ານໃດທີ່ມີຄວາມກັງວົນກ່ຽວກັບການລະບົບສືບພັນ ສ່ວນຕົວຫຼືມີບັນຫາສຸຂະພາບທາງເພດ ເຮົາຂໍແນະນຳໃຫ້ໄປຂໍຄຳປຶກສາແລະຂໍຄວາມຊ່ວຍເຫຼືອຈາກແພດຮັກສາສຸຂະພາບຂອງຕົນຫຼືໄປທີ່ຄລີນິກວາງແຜນຄອບຄົວ.

ທົບທວນ: ມິຖຸນາ 2014 | FPNSW 06/14

family planning nsw
Reproductive & Sexual Health

Fact Sheet - English

# VASECTOMY

## What Is A Vasectomy?

A vasectomy is an operation that men can have so that they cannot make a woman pregnant. It is a permanent form of contraception.

## How Does A Vasectomy Work?

It prevents sperm from travelling out of the testes (balls) and into the semen. If there are no sperm in the semen, a woman cannot become pregnant. It does not change a man's ability to enjoy sex or to ejaculate.

## How Well Does It Work?

A vasectomy works very well. It is more than 99% effective.

## What Happens When You Have A Vasectomy?

A vasectomy is a simple operation that takes about 20-40 minutes. It is usually done under sedation or a local anaesthetic, but it can be done under a general anaesthetic. The doctor makes a small opening in the front of the man's scrotum, and cuts and seals the ends of the tubes that carry the sperm. The opening in the scrotum is closed with a stitch or by pressing the skin edges together.

After the operation, the man may be asked to wait at the centre for up to two hours. Pain-killing medication and tight-fitting supportive underpants can help relieve any soreness.

## After The Vasectomy

The man should rest for a few days and avoid any heavy physical exercise for one week. The doctor will tell him when he can shower or bathe, when to remove the dressing, and when he can have sexual intercourse again.

## When Will It Be Effective?

A man will still have sperm for some time after the operation. It may take as many as 20 ejaculations to clear. He has to take a sample of his semen to a pathology laboratory for testing two months after the operation. He will need to use another form of contraception, e.g. condoms, until tests show his semen has no sperm in it.

## Are There Any Side Effects?

There may be slight soreness, swelling and bruising that lasts for a few days after the operation. Serious side effects are rare.

## What If It Doesn't Work?

About one in every 500-1,000 Vasectomies fail and the man may stay fertile or become fertile again. Normally this is picked up in the tests three months after the operation, but it can happen at any time.

## Can A Vasectomy Be Reversed?

Sometimes a vasectomy can be reversed but even if the operation is successful, there is no guarantee that the man will then be able to father a child. If a man thinks there is any chance he may want to father children in the future he should not have a vasectomy.

## How Do You Get A Vasectomy?

A vasectomy referral can be arranged through a local doctor or Family Planning clinic. A man does not need permission from his partner to have a vasectomy.

## For Further Information

- Contact the Family Planning NSW Talkline on 1300 658 886 or go to www.fpnsw.org.au/talkline
- NRS (for deaf) 133 677
- Or visit your nearest Family Planning clinic

*Reviewed: June 2014 | FPNSW 06/14*

*The information in this Factsheet has been provided for educational purposes only. Family Planning NSW has taken every care to ensure that the information is accurate and up-to-date at the time of publication. Individuals concerned about any personal reproductive or sexual health issue are encouraged to seek advice and assistance from their health care provider or visit an Family Planning NSW clinic.*



The information in this Fact Sheet has been provided for educational purposes only. FNPNSW has taken every care to ensure that the information is accurate and up-to-date at the time of publication. Individuals concerned about any personal reproductive or sexual health issue are encouraged to seek advice and assistance from their health care provider or visit a Family Planning Clinic.
Reviewed May 2014/FPNSW 05/14